*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 04, 69-76*
*https://doi.org/10.69692/SUJMRD110469*

# The Myth of Luang Phrabang and the Construction of Cultural Landscape

**PhitsaphongVONGPHACHANH*[1], Phatsada SOUKCHALUEN[2], Sommor PANYAVONG[3], Phone PHENGPHANYA[4]**

*Department of Lao Language and Culture, Faculty of Letters, National University of Lao PDR*

***Correspondence:** Phitsaphong VONGPHACH, *Department of Lao Language and Culture, Faculty of Letters, National University of Lao.* *Tel: +856 20 52924569,* *E-mail:* pong.nuol@gmail.com

*Article Info:*
*Submitted: October 20, 2025*
*Revised: November 10, 2025*
*Accepted: November 17, 2025*

**Abstract**

This article presents a study on Luang Prabang legends and their articulation of the cultural landscape. The objective of the research is to analyze the content of these legends, which describe the historical settlement of villages and towns, the identification of sacred sites and the organization of traditional ritual ceremonies, as well as the natural features embedded within the Luang Prabang narrative tradition.

The concept of cultural landscape in the context of the Luang Prabang legends can be understood through three main thematic categories found across ten core stories. First, the legends describe the settlement of villages, such as the *Chanthaphanith* legend, the naming of Xieng Thong, the founding of Xieng Thong City, and the establishment of communities along the Mekong River and the Khan River. Second, they portray sacred places and traditional ceremonies, exemplified by the stories of the Fifteen Naga Clans and the Forty Naga Clans. Third, the legends narrate the origins of natural features, such as in the story of Mount Phou Nang.

**Keywords: Legend, Assembly, Landscape, culture**

## 1. ພາກສະເໜີ

ແຂວງຫຼວງພະບາງເປັນແຂວງໜຶ່ງທີ່ຕັ້ງຢູ່ທາງພາກເໜືອຂອງລາວ, ທິດເໜືອຕິດກັບແຂວງຜົ້ງສາລີ ທິດໃຕ້ຕິດກັບແຂວງວຽງຈັນ ທິດຕາເວັນອອກຕິດກັບ ແຂວງຫົວພັນ, ແຂວງຊຽງຂວາງ ແລະ ສ.ສ ຫວຽດນາມ ທິດຕາເວັນຕົກຕິດກັບ ແຂວງອຸດົມໄຊ ແລະ ແຂວງໄຊຍະບູລີ, ມີເນື້ອທີ່ທັງໝົດປະມານ 18.000 ກິໂລຕາແມັດ, ມີພົນລະເມືອງປະມານ 4 ແສນຄົນ ແລະ ປະກອບດ້ວຍ 12 ຕົວເມືອງຄື: ນະຄອນຫຼວງພະບາງ, ເມືອງຊຽງເງິນ, ເມືອງນານ, ເມືອງປາກອູ, ເມືອງນ້ຳບາກ, ເມືອງງອຍ, ເມືອງປາກແຊງ, ເມືອງໂພນໄຊ, ເມືອງຈອມເພັດ, ເມືອງວຽງຄຳ, ເມືອງພູຄູນ ແລະ ເມືອງໂພນທອງ. ນະຄອນຫຼວງພະບາງຍັງໄດ້ຮັບການຍ້ອງຍໍໃຫ້ເປັນເມືອງມໍລະດົກໂລກຈາກອົງການຢູແນັດສະໂກ (UNESCO) ໃນວັນທີ 9 ເດືອນ 12 ປີ 1995. ຫຼວງພະບາງເປັນແຂວງໜຶ່ງທີ່ເຕັມໄປດ້ວຍມົນສະເໜ່ ບໍ່ວ່າໃຜໆທີ່ໄດ້ມາຢ້ຽມຢາມຕ່າງກໍພາກັນຫຼົງໄຫຼ, ຕິດໃຈ ແລະ ຢາກຫວນກັບຄືນມາອີກ. ເຖິງວ່າຕົວເມືອງຫຼວງພະບາງຈະນ້ອຍ ແຕ່ສິ່ງທີ່ເຮັດໃຫ້ຫຼວງພະບາງແຕກຕ່າງຈາກບ່ອນອື່ນນັ້ນກໍຄື ຮີດຄອງປະເພນີວັດທະນະທຳ ແລະ ວິຖີການດຳລົງຊີວິດແບບດັ້ງເດີມຂອງຊາວ "ເມືອງຫຼວງ" ລວມທັງສະຖາປັດຕະຍະກຳອັນເກົ່າແກ່ທີ່ຍັງຖືກປົກປັກຮັກສາໄວ້ຢ່າງດີ (Phimpanith, 2015: 55). ຈາກການສຳຫຼວດລົງເກັບກຳຂໍ້ມູນຕົວຈິງໃນຄັ້ງວັນທີ 5.12.2024 ພົບວ່າ ຫຼວງພະບາງມີວັດທະນະທຳຮີດຄອງປະເພນີທີ່ເປັນເອກະລັກສະເພາະ ເຊັ່ນ ອາຫານ, ພາສາປາກເວົ້າ, ການນຸ່ງຖື, ຮີດຄອງປະເພນີ, ການສະແດງພື້ນເມືອງ ເຊັ່ນ ຟ້ອນນາງແກ້ວ, ຟ້ອນຄາບໄຫ, ຟ້ອນມວຍລາຍລາວ, ຟ້ອນໂຂນ, ຟ້ອນງ້າວ, ຂັບທຸ້ມ, ຂັບອ່ານໜັງສື, ລະຄອນອີປ໋ອກ ເຫຼົ່ານີ້ເປັນຕົ້ນ. ສິລະປະການສະແດງຂອງປະຊາຊົນບັນດາເຜົ່າທີ່ມີມາແຕ່ບູຮານຈົນກາຍເປັນສິລະປະທີ່ມີຄວາມນິຍົມຊົມຊອບຂອງປວງຊົນທົ່ວໄປ ໂດຍສະເພາະການຟ້ອນນາງແກ້ວ, ຟ້ອນຍັກ, ຟ້ອນ ໂຂນ, ລະຄອນອີ່ປ໋ອກ.

ນະຄອນຫຼວງພະບາງໃນສະໄໝກ່ອນເປັນດິນແດນ ທີ່ມີຄວາມອູດົມສົມບູນ ແລະ ມີພູມສັນຖານທີ່ເໝາະສົມໃນການຕັ້ງຖິ່ນຖານຂອງຄົນ ແລະ ເປັນທີ່ຢູ່ອາໄສຂອງພືດສັດຕ່າງໆ ເປັນຈຳນວນຫຼວງຫຼາຍ ຈົນເປັນທີ່ກ່າວຂານ ແລະເກີດມີເລື່ອງເລົ່າກ່ຽວກັບຕຳນານຕ່າງໆ ໃນຊຸມຊົນຫຼວງພະບາງ ໂດຍສະເພາະແມ່ນຕຳນານກ່ຽວກັບສະຸຖານທີ່ສຳຄັນຫຼາຍແຫ່ງທີ່ມີຄວາມສຳພັນກັບພູມສັນຖານທາງວັດທະນະທຳເປັນຈຳນວນຫຼວງຫຼາຍ ເຊັ່ນ ຕຳນານກ່ຽວກັບຍັກນັນທາ (ປູ່ເຈົ້າຫານີ) ຍັກພາລາ, ທ້າວພີຊີ່ ແລະ ນາງພີໄສ, ອ້າຍສະເລີກເຄີກ ພູຊວງພູຊ້າງ, ພູທ້າວພູນາງ, ພູສີ, ຕົ້ນທອງ, ປູເຍີຍ່າເຍີ, ເຈັດສິບເຈັດຊຽງຫນຶ່ງຫລັກເມືອງ (National Library, 1969:2) ໜອງຊີວ, ສັງຂະມັງກອນ. ສິງກະໂລ, ພະຍານາກສິບຫ້າຕະກູນ ພະຍານາກຊາວສີ່ຕະກູນ, ພໍ່ຄ້າຈັນທະພານິດ, ຂຸນບູລົມ ຂຸນລໍ (Piniht, 1987: 361-362) ແລະ ຍັງມີເລື່ອງເລົ່າເປັນຈຳນວນມາກຊຶ່ງເປັນການສະທ້ອນໃຫ້ເຫັນເຖິງຄວາມສຳຄັນຂອງຕຳນານ ເນື່ອງຈາກວ່າການສ້າງເລື່ອງເລົ່າກ່ຽວກັບຕຳນານເລື່ອງໃດເລື່ອງໜຶ່ງຂຶ້ນມານັ້ນຕ້ອງມີຄວາມໝາຍ ມີແນວຄິດແຊກຊ້ອນຢູ່ໃນເລື່ອງດັ່ງກ່າວ ດັ່ງທີ່ Hongsouvhanh (2011:189-190) ກ່າວວ່າ ການກະທຳທຸກຢ່າງຂອງມະນຸດເກີດຈາກຄວາມຄິດ ແລະຈິນຕະນາການຕ່າງໆ ບໍ່ວ່າຈະເປັນເລື່ອງເລົ່າ, ຕານານ, ຄວາມເຊື່ອ ແລະ ພິທີກຳ ລ້ວນແຕ່ມີເຫດຜົນທີ່ສ້າງສັນເຮັດໃຫ້ເກີດສິ່ງເຫຼົ່ານີ້ຂຶ້ນມາທັງຫມົດ ບາງຄັ້ງຄົນຢູ່ນອກສັງຄົມອາດຈະບໍ່ເຂົ້າໃຈ ແລະຮັບຮູ້ວ່າສິ່ງທີ່ຕົນເອງ ແລະ ສະມາຊິກໃນສັງຄົມເຮັດ ແລະ ປະພຶດປະຕິບັດມີຄວາມໝາຍ ແລະ ບົດບາດຫນ້າທີ່ໃນສັງຄົມ. ນອກຈາກນີ້ຕຳນານຍັງໄດ້ສ້າງໂລກະທັດຈັກກະວານ, ສັງຄົມວັດທະນະທຳ, ປະຫວັດສາດ. ບອກສະຖານະພາບຕົວຕົນຂອງບຸກຄົນໃນສັງຄົມ ແລະສະທ້ອນໃຫ້ເຫັນການຕັ້ງຊື່ຂອງສະຖານທີ່, ຊຸມຊົນ, ບ້ານເມືອງ, ຜູ້ຄົນ, ແມ່ນ້ຳລຳຄອງ, ດັ່ງທີ່ Vhanhliphodom (2014: 23-24) ອະທິບາຍວ່າ ພູມສັນຖານທາງວັດທະນະທຳໝາຍເຖິງ ລັກສະນະພູມ

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/*)*

ສັນຖານທາງພູມສາດ ຂອງປະເທດໃນຂົງເຂດບໍລິເວນໃດບໍລິເວນໜຶ່ງ ເຊັ່ນ ບໍລິເວນປ່າເຂົາລຳເນົາ, ທົ່ງພຽງ, ໜອງບຶງ, ແມ່ນ້ຳລາຄອງ ຫຼື ປາກອ່າວ, ຊາຍທະເລ ທີ່ມີຄວາມກ່ຽວຂ້ອງກັບການຕັ້ງຖິ່ນຖານບ້ານເມືອງຂອງຜູ້ຄົນໃນທ້ອງຖິ່ນ ຈົນຕໍ່ມາເປັນທີ່ຮັບຮູ້ນຳກັນ ແລະ ມີການກຳນົດການຕັ້ງຊື່ເປັນສະຖານທີ່ຕ່າງໆ ໃຫ້ເປັນທີ່ຮູ້ຈັກນຳກັນໃນລັກສະນະທີ່ເປັນແຜນທີ່ເພື່ອສື່ສານເຖິງກັນໂດຍສ້າງເປັນຕຳນານ (Myth) ຂຶ້ນເພື່ອອະທິບາຍເຖິງຄວາມເປັນມາ ແລະ ຄວາມໝາຍຄວາມສຳຄັນທາງປະຫວັດສາດ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ ໂດຍຕຳນານເຫຼົ່ານັ້ນມີທັງຂຽນບັນທຶກເປັນລາຍລັກອັກສອນ ແລະ ການບອກເລົ່າຕາມຄວາມຊົງຈຳຂອງຄົນຮຸ່ນຫຼັງທີ່ຮູ້ຈັກ ແລະຖ່າຍທອດໃຫ້ຄົນຮຸ່ນໃໝ່ ແລະ ຄົນທ້ອງຖິ່ນສືບຕໍ່ກັນມາ.

ເມື່ອເປັນດັ່ງນັ້ນ, ຮ່ອງຮອຍສະຖານທີ່ຕ່າງໆ ທີ່ເປັນຄວາມເຊື່ອຂອງຄົນໃນເຂດພູມສັນຖານດັ່ງກ່າວພວກເຂົາເຈົ້າຈະຮູ້ຈັກ ແລະມີຄວາມກ່ຽວຂ້ອງກັນກັບພູມສັນຖານ. ສະນັ້ນ, ກຸ່ມຄົນເຫຼົ່ານີ້ຈະສາມາດອະທິບາຍ ແລະເຊື່ອມໂຍງເຖິງພູມສັນຖານທາງວັດທະນະທຳໄດ້ ໃນຖານະທີ່ເປັນສື່ ຫຼື ຂໍ້ມູນທາງວັດທະນະທຳຢ່າງໜຶ່ງທີ່ຈະຊ່ວຍໃຫ້ເຮົາເບິ່ງເຫັນ ແລະ ເຂົ້າໃຈເຖິງແນວຄິດຈິດໃຈ, ຄວາມຮູ້ສຶກນຶກຄິດ ແລະ ຈິນຕະນາການຂອງຊາວນະຄອນຫຼວງພະບາງຜ່ານຕຳນານ ຫຼື ເລື່ອງເລົ່າເຫດການ, ວັດຖຸສິ່ງຂອງ, ຕົວລະຄອນ ແລະ ອື່ນໆ. ໃນຕຳນານຂອງຊາວຫຼວງພະບາງ, ອີກຢ່າງເນື່ອງຈາກຕຳນານເປັນເລື່ອງທີ່ກ່ຽວຂ້ອງກັບອາລົມ, ຄວາມຮູ້ສຶກນຶກຄິດຂອງຜູ້ຄົນ ແລະ ສາມາດບົ່ງບອກເຖິງຄວາມເປັນປຶກແຜ່ນເປັນໜຶ່ງດຽວຂອງສັງຄົມໄດ້. ຕຳນານດັ່ງກ່າວຈຶ່ງເປັນເຄື່ອງມືທີ່ຈະສະທ້ອນໃຫ້ເຫັນຄວາມຄິດຄວາມເຊື່ອ, ຄ່ານິຍົມ, ຄວາມຊົງຈຳ, ອຸດົມການທາງສັງຄົມທີ່ຊາວນະຄອນຫຼວງພະບາງຮັບຮູ້ນຳກັນ. ດັ່ງ Sombat (1997:1)ໄດ້ກ່າວວ່າຕຳນານເປັນສ່ວນໜຶ່ງຂອງການຖ່າຍທອດວັດທະນະທຳ ແລະ ເລື່ອງລາວທາງສັງຄົມ ແລະ ເປັນເລື່ອງເລົ່າທີ່ບົ່ງບອກໃຫ້ເຫັນເຖິງລະບົບຄວາມຮູ້, ຄວາມຄິດ ແລະ ຄວາມເຊື່ອຂອງກຸ່ມຄົນໃນສັງຄົມ ຫາກເຮົາເບິ່ງກັບໄປໃນອະດີດຈະພົບວ່າ ມະນຸດມັກມີຄວາມສົງໄສ ແລະ ຕັ້ງບັນຫາເພື່ອຖາມຕົນເອງວ່າ ພວກເຂົາເປັນໃຜ, ມາຈາກໃສ ແລະ ເປັນຫຍັງຈຶ່ງມີພຶດຕິກຳ ແລະວິຖີຊີວິດດັ່ງທີ່ເປັນຢູ່ ເພື່ອອະທິບາຍບັນຫາ ແລະຂໍ້ສົງໄສຕ່າງໆ ມະນຸດຈຶ່ງຫາທາງອອກດ້ວຍການສະແດງອອກໃນຮູບແບບຂອງຕຳນານ, ເລື່ອງເລົ່າ ແລະຄວາມເຊື່ອຕ່າງໆທີ່ກ່າວເ◌ຸ◌ິງຕົ້ນກຳເນີດ ຫຼືຕຳນານຂອງບັນພະບູລຸດ ແລະ ປະຫວັດສາດຄວາມເປັນມາໃນອະດີດຂອງຕົນ. Hongsouvhanh (2007:1-3) ເວົ້າວ່າ ຕຳນານ ຫຼື “Myth” ໝາຍເຖິງຄຳ ຫຼື ຖ້ອຍຖະແຫຼງອັນເປັນຄວາມຄິດຄວາມເຊື່ອທີ່ເຊື່ອມໂຍງສຳພັນກັບເລື່ອງຂອງພະເຈົ້າ, ອຳນາດເໜືອທຳມະຊາດ ແລະ ສິ່ງສັກສິດເລື່ອງເລົ່າໃນຕຳນານອາດຈະອະທິບາຍເຖິງການກຳເນີດຈັກກະວານ, ກຳເນີດໂລກ, ກຳເນີດມະນຸດ ແລະ ກຳເນີດຊຸມຊົນສັງຄົມ ຕຳນານໃນຫຼາຍວັດທະນະທຳມີບົດບາດເປັນແບບແຜນສຳລັບສະແດງອອກໃນທາງຈາຮີດປະເພນີ ແລະ ພິທີກຳຂອງສັງຄົມ ລວມທັງເປັນແຫຼ່ງຄວາມຮູ້ຂອງກຸ່ມຊົນ. ດັ່ງນັ້ນ, ດັ່ງນັ້ນຕຳນານບໍ່ແມ່ນເລື່ອງເລົ່າທຳມະດາ ແຕ່ມີຄວາມສຳພັນກັບຂະບວນຄິດ, ຄວາມເຊື່ອທີ່ກ່ຽວຂ້ອງກັບອຳນາດເໜືອທຳມະຊາດ ແລະ ສິ່ງສັກສິດທັງຫຼາຍ. Stuart Hall (2003:19-21) ນິຍາມວ່າ ການຜະລິດສ້າງຄວາມໝາຍໂດຍການໃຊ້ລະບົບສັນຍະ ເປັນການເຊື່ອໂຍງແນວຄິດກັບສັນຍະເຂົ້າກັນ ຫຼື ເປັນການນຳສະເໜີແນວຄິດຜ່ານສັນຍະ ແລະ ຍັງກ່າວວ່າຂອງຂະບວນການໃຫ້ຄວາມໝາຍທາງວັດທະນະທຳ ຄືສັນຍະລັກຂອງການຕີຄວາມເຊິ່ງຕ້ອງຂຶ້ນຢູ່ກັບຄວາມສາມາດໃນການຕີຄວາມໝາຍຂອງຄຳໂດຍການເຊື່ອມໂຍງໄປເຖິງສິ່ງຕ່າງໆເຊັ່ນ ຄົນ, ເລື່ອງລາວ, ສະຖານະການ ແລະແນວຄິດທີ່ເປັນນາມມະທຳ ແລະ ສັນຍະລັກທາງມະໂນທັດ ທີ່ເປັນຜົນຜະລິດຂອງການປະກອບສ້າງຄວາມໝາຍ.

ຈາກຫຼັກການ ແລະ ເຫດຜົນທີ່ໄດ້ກ່າວມາຂ້າງເທິງນັ້ນ ເຫັນວ່າຫຼວງພະບາງເປັນສະຖານທີ່ຖືກສ້າງຂຶ້ນມາຕັ້ງແຕ່ສະໄໝບູຮານ ແລະເປັນສູນກາງຂອງດິນແດນອານາຈັກລາວລາວລ້ານຊ້າງທີ່ລືນາມ, ເປັນນະຄອນທີ່ເອກອ້າງທາງວັດທະນະທຳທີ່ງົດງາມຂອງປະເທດ, ເປັນເມືອງທີ່ມີຄວາມສຳຄັນຕໍ່ກັບປະເທດ ແລະ ມີຊື່ສຽງມາເຖິງສະໄໝປັດຈຸບັນສິ່ງຕ່າງໆທີ່ກ່າວມາໃນເບື້ອງຕົ້ນໄດ້ເປັນແຮງບັນດານໃຈ ແລະເປັນເຫດຜົນທີ່ສຳຄັນທີ່ເຮັດໃຫ້ຄະນະກຸ່ມຄົ້ນຄວ້າ ສົນໃຈທີ່ຈະສຶກສາຕຳນານຫຼວງພະບາງກັບການປະກອບສ້າງພູມສັນຖານທາງວັດທະນະທຳ ໂດຍມີຈຸດປະສົງເພື່ອວິເຄາະເນື້ອໃນຂອງຕຳນານທີ່ອະທິບາຍເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ ແລະການຈັດງານປະເພນີພິທີກຳ ແລະ ສະຖານທີ່ທຳມະຊາດຂອງຕຳນານຫຼວງພະບາງ.

**2. ອຸປະກອນ ແລະ ວິທີການ**

**2.1 ກຸ່ມເປົ້າໝາຍ**

ກຸ່ມເປົ້າໝາຍໃນການຄົ້ນຄວ້າຄັ້ງນີ້ ຄະນະນັກຄົ້ນຄວ້າໄດ້ກຳຫນົດຂອບເຂດ ພື້ນທີ່ນະຄອນຫຼວງພະບາງ, ແລະ ເມືອງອ້ອມຂ້າງຂອງນະຄອນຫຼວງພະບາງ ປະກອບມີ 4 ເມືອງ 1 ນະຄອນ ຄືນະຄອນຫຼວງພະບາງ, ເມືອງຈອມເພັດ, ເມືອງຊຽງເງິນ, ເມືອງປາກອູ, ເມືອງປາກແຊງ. ແຕ່ລະເມືອງ ກຳນົດເອົາ 2 ຄົນ ທີ່ມີຄວາມຮູ້ດ້ານຕຳນານຫຼວງພະບາງ.

**2.2 ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງແມ່ນກຳນົດເອົາເມືອງລະ 2 ຄົນ ຄື ນະຄອນຫຼວງພະບາງ, ເມືອງຈອມເພັດ, ເມືອງຊຽງເງິນ, ເມືອງປາກອູ, ເມືອງປາກແຊງ ລວມທັງໝົດ 10 ຄົນ.

- ສຳລັບຜູ້ໃຫ້ຂໍ້ມູນໃນການຄົ້ນຄວ້າໃນຄັ້ງນີ້ ແມ່ນບຸກຄົນພື້ນຖານຂອງບ້ານ ແລະ ທີ່ຮູ້ຂໍ້ມູນກ່ຽວກັບ ສະຖານທີ່ຕັ້ງຂອງບ້ານເມືອງ, ສະຖານທີ່ສັກສິດ ແລະ ການຈັດງານປະເພນີພິທີກຳ ແລະສະຖານທີ່ທຳມະຊາດ ຂອງຕຳນານຫຼວງພະບາງ. ເຊິ່ງກຸ່ມຜູ້ຄົ້ນຄວ້າໄດ້ກຳນົດ ແລະ ຄັດເລືອກຕາມເກນດັ່ງນີ້:

- ຜູ້ທີ່ມີຄວາມຮູ້ສະເພາະດ້ານ, ມີຄວາມຊຳນິຊຳນານສາມາດເລົ່າຂໍ້ມູນກ່ຽວກັບຕຳນານຫຼວງພະບາງ.

- ຜູ້ໃຫ້ຂໍ້ມູນກ່ຽວກັບຕຳນານຫຼວງພະບາງ ຕ້ອງເປັນຄົນທີ່ສາມາດຕອບຄຳຖາມ ແລະໃຫ້ການຮ່ວມມື ຫຼື ເຕັມໃຈໃນການສຳພາດເປັນຢ່າງດີ.

ສຳລັບການກຳນົດປະຊາກອນຕົວຢ່າງແມ່ນນຳໃຊ້ແນວຄິດທິດສະດີຂອງ Phimpho Luangla (2016:65)

**2.3 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

ເຄື່ອງມືການວິໄຈແມ່ນນຳໃຊ້ຊຸດແບບສຳພາດ ຫຼື ຄຳຖາມສຳພາດ ແລະ ອຸປະກອນຕ່າງໆ ເຊັ່ນ ຄອມພິວເຕີ ເຄື່ອງບັນທຶກສຽງ, ບິກ , ປຶ້ມບັນທຶກ ແລະ ກ້ອງຖ່າຍຮູບ.

**2.4 ຂັ້ນຕອນການເກັບກຳຂໍ້ມູນ**

- ລົງປະສານງານນຳພາກສ່ວນກ່ຽວຂ້ອງ ຄື ພະແນກ ຖະແຫຼງຂ່າວແຕ່ລະເມືອງ ເຊັ່ນ ເມືອງຈອມເພັດ, ເມືອງຊຽງເງິນ, ເມືອງປາກອູ, ເມືອງປາກແຊງ ເພື່ອກຽມຄວາມພ້ອມລົງເກັບກຳຂໍ້ມູນ.
- ນັດໝາຍເພື່ອເຕົ້າໂຮມຜູ້ຊ່ວຍໃຫ້ຂໍ້ມູນກ່ຽວກັບຕຳນານຫຼວງພະບາງ.
- ສຳພາດຜູ້ຊ່ວຍໃຫ້ຂໍ້ມູນກ່ຽວກັບຕຳນານຫຼວງພະບາງ.

**2.5 ຮູບແບບການວິເຄາະຂໍ້ມູນ**

ການສຶກສາຄັ້ງນີ້ກຸ່ມຜູ້ຄົ້ນຄວ້າໄດ້ມີຂັ້ນຕອນໃນການວິເຄາະຂໍ້ມູນ ໂດຍອີງໃສ່ຂໍ້ມູນທີ່ໄດ້ຈາກການສຳພາດແລ້ວນຳມາວິເຄາະໄປຕາມແຕ່ລະພາກສ່ວນດັ່ງນີ້:

ສຳຫຼວດ ແລະ ຮວບຮ່ວມຂໍ້ມູນກ່ຽວກັບຕຳນານພູມສັນຖານທາງວັດທະນະທຳທີ່ຫຼວງພະບາງ ໂດຍຮວບຮວມຕຳນານນິທານພື້ນບ້ານຈາກເອກະສານ, ຈາກການລົງໃນພາກສະໜາມທີ່ຫຼວງພະບາງ.

ຈັດໝວດໝູ່ຂໍ້ມູນອອກເປັນສາມກຸ່ມ ຄື ຕຳນານທີ່ອະທິບາຍເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ, ການຈັດງານປະເພນີພິທີກຳ ແລະ ສະຖານທີ່ທຳມະຊາດ.

ດຳເນີນການສຶກສາວິເຄາະຂໍ້ມູນໂດຍໃຊ້ແນວຄິດກ່ຽວກັບເລື່ອງເລົ່າ, ການປະກອບສ້າງຄວາມໝາຍ, ແນວຄິດເລື່ອງພູມສັນຖານທາງວັດທະນະທຳ ມາໃຊ້ໃນການວິເຄາະເພື່ອເຊື່ອມໂຍງກັບສັງຄົມ ແລະ ວັດທະນະທຳລາວ ຜ່ານການນຳສະເໜີພາບແທນຂອງພູມສັນຖານໃນຕຳນານນະຄອນຫຼວງພະບາງ.

ເກນການວິເຄາະ ກຸ່ມຜູ້ຄົ້ນຄວ້າ ໄດ້ໃຊ້ແນວຄິດກ່ຽວກັບເລື່ອງເລົ່າ (Narratives) ຕຳນານຂອງ Malinowski (Sethaphan, 1993:10-11) ແນວຄິດພູມສັນຖານທາງວັດທະນະທຳ (Cultural Landscape) Vhanhliphodom (2011: 23) ແລະ ແນວຄິດເລື່ອງການປະກອບສ້າງຄວາມໝາຍຂອງ Stuart Hall(1997:4)

**3. ຜົນຂອງການຄົ້ນຄວ້າ**

ເນື້ອໃນຂອງຕຳນານທີ່ອະທິບາຍເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ ແລະ ການຈັດງານປະເພນີພິທີກຳ ແລະ ສະຖານທີ່ທຳມະຊາດຂອງຕຳນານຫຼວງພະບາງ. ກຸ່ມຜູ້ຄົ້ນຄວ້າສາມາດຄົ້ນພົບ 3 ເນື້ອໃນຫຼັກ ຄື ເນື້ອໃນຕຳນານພູມສັນຖານຫຼວງພະບາງ, ເນື້ອໃນຕຳນານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບສະຖານທີ່ສັກສິດ ແລະຈັດງານປະເພນີພິທີກຳ ແລະ ເນື້ອໃນຕຳນານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບສະຖານທີ່ທາງທຳມະຊາດ. ລາຍລະອຽດຜົນການວິໄຈມີດັ່ງນີ້:

**3.1 ເນື້ອໃນຕຳນານພູມສັນຖານຫຼວງພະບາງ**

ເນື້ອໃນຕຳນານພູມສັນຖານຫຼວງພະບາງຫຼວງພະບາງ ກໍມີພູມສັນຖານຫຼາຍແຫ່ງທີ່ເຫັນວ່າ ມີການນຳເອົາເລື່ອງເລົ່າ, ເຫດການທີ່ສຳຄັນຕ່າງໆ ຫຼື ນຳເອົາເລື່ອງໃນວັນນະຄະດີ ບາງເຫດການ, ສາກ, ຕົວລະຄອນ ແລະ ອື່ນໆມາປະກອບສ້າງໃຫ້ພູມສັນຖານຈິນກາຍເປັນຕຳນານບອກເລົ່າ ທີ່ມີເນື້ອໃນເວົ້າເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ, ການຈັດງານປະເພນີພິທີກຳ ແລະ ສະຖານທີ່ທຳມະຊາດ ເພື່ອອະທິບາຍພູມສັນຖານຂອງຫຼວງພະບາງ. ຜົນການຄົ້ນຄວ້າພົບ 10 ບົດ ຫຼື 10 ເລື່ອງ ແຕ່ຄະນະຜູ້ວິໄຈຍົກພຽງ 4 ເລື່ອງ ດັ່ງລາຍລະອຽດຕໍ່ໄປນີ້:

**3.1.1 ເນື້ອໃນຕຳນານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບການຕັ້ງຖິ່ນຖານບ້ານເມືອງ**

ຈາກການສຶກສາຕຳນານພູມສັນຖານຫຼວງພະບາງ ພົບວ່າວິທີການເລືອກທີ່ຕັ້ງຖິ່ນຖານ ແລະ ການສ້າງບ້ານແປງເມືອງຕັ້ງແຕ່ອະດີດຈະເຫັນວ່າ ຊາວຫຼວງພະບາງມັກຕັ້ງຖິ່ນຖານຢູ່ເຂດທີ່ເປັນທົ່ງພຽງ ໂດຍສະເພາະແມ່ນເຂດທົ່ງພຽງລະຫວ່າງພູ, ລຽບຕາມແຄມແມ່ນ້ຳ ລັກສະນະພູມສັນຖານທີ່ເລືອກແມ່ນມີສະພາບທີ່ອຳນວຍຄວາມສະດວກໃຫ້ແກ່ທີ່ຢູ່ອາໄສ, ການທຳມາຫາກິນ ເຊັ່ນ ການຄົມມະນາຄົມໄປມາຫາສູ່ກັນ, ການເຮັດໄຮ່, ເຮັດນາ, ເຮັດສວນ; ການລ່າສັດ, ຫາປາໃນແມ່ນ້ຳ ແລະ ອື່ນໆ. ນອກຈາກນີ້ພູມສັນຖານດັ່ງກ່າວຍັງເປັນພື້ນທີ່ທີ່ສັກສິດ, ມີຊັບໃນດິນສິນໃນນ້ຳ, ມີປ່າໄມ້ທີ່ອຸດົມສົມບູນ ລວມເຖິງວັດສະດຸໃນການສ້າງສາບ້ານເມືອງ ແລະ ວັດວາອາຮາມອັນຊີງຄຸນຄ່າ ແລະ ມີລາຄາສູງ ດັ່ງຕຳນານທີ່ຈະອະທິບາຍຕໍ່ໄປນີ້:

**1) ເນື້ອໃນຕຳນານຈັນທະພານິດ**

ຕຳນານ ໄດ້ກ່າວເຖິງທ້າວຈັນທະພານິດ ເປັນພໍ່ຄ້າຂາຍພູ, ວັນໜຶ່ງ ທ້າວຫາບພູມາຮອດບ້ານ ຈຶ່ງຂໍນອນໃນກຸດຕິພະມະຫາເຖລະ ຊື່ວ່າ ປັງສຸກຸລະເຖັນ ຢູ່ເມືອງຈັນທະບູລີ ໃນຄືນນັ້ນທ້າວນອນຫຼັບ ສຽງກົນດັງອອກຕ້ອງໃສ່ກອງເປັນສຽງດຸຣິຍະນັນຕີ 5 ປະການ. ມະຫາເຖລະ ຈຶ່ງມາພິຈາລະນາດູວ່າ ທ້າວຜູ້ນີ້ຈະໄດ້ເມືອສະເຫວີຍລາຊະສົມບັດ ເປັນທ້າວພະຍາໃນເມືອງຊວາ. ຍາມນັ້ນມະຫາເຖລະ ກໍ້ກອຍພູໄປໃສ່ ເພື່ອປຸກທ້າວເລີຍສະດຸ້ງຕື່ນ ແລະ ມາເລົ່າຄຳຝັນຂອງຕົນວ່າ ຜູ້ຂ້ານອນຄືນນີ້ຝັນວ່າ ເຈົ້າລັດສີຕົນ 1 ມີອິດທິລິດເກັ່ງກ້າທະຍານມາແຕ່ອາກາດ ກໍ່ມາກໍ້ກອຍພູທັບຕົນຂ້ານ້ອຍຈັກຊິເປັນເຫດການສິ່ງໃດເກີດຂຶ້ນແກ່ຜູ້ຂ້າ, ຕອນນັ້ນພະມະຫາເຖລະ ຈຶ່ງມາກ່າວແກ້ທຳນາຍ ວ່າທ່ານຝັນໃຫຍ່ແປກແບບນີ້ ທ່ານຈະໄດ້ເມືອສະເຫວີຍລາຊະສົມບັດ ເປັນທ້າວພະຍາ ໃນເມືອງຊວາທາງພາກເໜືອພຸ້ນ. ເຈົ້າຈົ່ງຂຶ້ນຂວາຍຫາເຮືອໄດ້ແລ້ວ ຊວນພີ່ນ້ອງມິດສະຫາຍ ຂຶ້ນເມືອຄ້າຂາຍ ພໍຂຶ້ນເມືອຮອດເຂດແດນເມືອງຊວາແລ້ວ ແຕ່ຜາກັບແກ້ ແລະ ຜາຕ່າງນາຍ ຂຶ້ນເມືອເໜືອ ຖ້າສິ້ນໄມ້ທີ່ຂອງເຈົ້າຫາກຄາບກ່ອນຄຳ ອອກມາ 2 ທີ 3 ທີ ແມ່ນຢ່າຟ້າວເອົາ ໃຫ້ປົດປ່ອຍລົງໃສ່ນ້ຳກ່ອນ ແລ້ວຊໍາຂຶ້ນເມືອເໜືອ ຄັນຮອດດອນບ່ອນ 1 ຊື່ວ່າດອນຄວາຍຮ່າ ຢູ່ຝາກແງ່ຊີບຫ້ວຍຄານນັ້ນ ໃຫ້ຈອດພັກຢູ່ຫັ້ນ ເມື່ອນັ້ນກ້ອນຫີນທັງມວນທີ່ດອນຄວາຍຮ່າ ແລະດອນຄວາຍພູມ ທັງທ້າຍເມືອງ ແລະ ຫົວເມືອງນັ້ນ ກໍຈະເກີດເປັນຄຳໝົດທັງມວນ ເປັນອັດສະຈັນຍິ່ງນັກ ໃຫ້ຕັ້ງບູຊາທຸກວັນທຸກຄືນຄົບ 7 ວັນ 7 ຄືນແລ້ວ ເຖິງວັນຖ້ວນ 8 ຈຶ່ງໃຫ້ຄົນທັງຫຼາຍ ຂົນເອົາຄຳທັງມວນນັ້ນເມືອໄວ້ເປັນລາຊະສົມບັດຂອງເຈົ້າ. ຈັນທະພານິດ ໄດ້ຍິນຄຳມະຫາເຖລະ ທຳນາຍຄຳຝັນໃຫ້ແກ່ຕົນ ດັ່ງນັ້ນ, ຈັນທະພານິດກໍ່ດີໃຈຊົມຊື່ນ , ພໍຮຸ່ງເຊົ້າຈັນທະພານິດ ຈຶ່ງຂົນຂວາຍຫາເຮືອໄດ້ເຫຼັ້ມ 1 ມາແລ້ວ ກໍ່ຈຶ່ງຊັກຊວນພີ່ນ້ອງມິດສະຫາຍທັງຫຼາຍ ວ່າເຮົາພີ່ນ້ອງວ່າຈະເມືອຄ້າຮອດເມືອງຊວາ ທີ່ເຂົາລືຊາວ່າມີເງິນມີຄຳຫຼວງຫຼາຍ ພວກເຂົາທັງຫຼາຍກໍ່ຍິນດີເມືອນຳ ເຂົາຈຶ່ງຊື້ເຄື່ອງຂອງຄ້າຂາຍຂົນໃສ່ເຮືອແລ້ວກໍໄປ. ມີວັນ 1 ເຂົາຂຶ້ນເມືອຮອດເມືອງຊຽງຄານຄໍ່າແລ້ວກໍ່ຈອດນອນທີ່ທ່າວັດຊຽງເຖົາ,

ໃນຄືນນັ້ນ ຈັນທະພານິດຝັນວ່າໄດ້ກິນອາຈົມເປັນຈຳນວນຫຼາຍ ພໍຕື່ນເຊົ້າມາແລ້ວ ທ້າວກໍ່ຮີບເມືອໄຫວ້ມະຫາເຖລະເຈົ້າ ວັດຊຽງເຖົາແລ້ວເລົ່າຄຳຝັນໃຫ້ ມະຫາເຖລະເຈົ້າຟັງ, ຈິ່ງແກ້ຄຳຝັນວ່າ ເຈົ້າຈົ່ງໄປເກັບເອົາໝາກເຂືອຕ່າວ ທີ່ປ່າຣາຍມາກິນກັບປາແດກສາກ່ອນ ກິນແລ້ວໃຫ້ສະເກົ້າດຳຫົວ ກໍ່ຈະມີໂຊກມີໄຊ ໄປພາຍໜ້າທ່ານກໍ່ຈະໄດ້ເຂົ້າຂອງກອງແກ້ວມາກມາຍ ຈັນທະພານິດ ກໍ່ເຮັດທຳຕາມຄຳມະຫາເຖລະເຈົ້າບອກ. ຫຼັງຈາກນັ້ນຈັນທະພານິດ ກໍ່ຂຶ້ນມາໂດຍຜ່ານຫຼາຍບ້ານຫຼາຍເມືອງຫຼາຍວັນຫຼາຍຄືນ ກໍ່ຈິ່ງມາຮອດຜາກັບແກ້, ຜາຕ່າງນາຍ ກາຍຂຶ້ນເມືອຍາມນັ້ນ ສິ້ນທໍ່ຈັນທະພານິດ ກໍ່ຄາບກ້ອນຄຳອອກມາ ປາກົດແກ່ຄົນທັງຫຼາຍເຫັນແທ້ ເຈົ້າກໍ່ບາຍເອົາມາປ່ອນລົງນຳ◌ເສັຍ ເລົ່າກໍ່ທໍ່ຂຶ້ນມາຄາວ 1 ສິ້ນທໍ່ກໍ່ເລົ່າຄາບຄຳອອກມາ 2 ທີ 3 ທີ ຈັນທະພານິດກໍ່ບາຍປ່ອນລົງນໍ້າ ຝູງບ່າວເຮືອທັງຫຼາຍ ເຂົາກໍ່ຕິອົກຕິທວງວ່າ ເສັຍດາຍເດຕອນນັ້ນຈັນທະພານິດ ຈິ່ງກ່າວວ່າ ເຈົ້າທັງຫຼາຍຢ່າໄດ້ເສັຍດາຍເທີ້ນເມືອພາຍໜ້າເຮົາທັງຫຼາຍຈະໄດ້ຫຼາຍກວ່ານີ້ຮ້ອຍເທົ່າພັນເທົ່າໝື່ນເທົ່າຍາມນັ້ນບ່າວເຮືອທັງຫຼາຍ ເຂົາຍິນດີ ໃສ່ໃຈທໍ່ເຮືອຂຶ້ນມາ ກາຍດອນຄວາຍຟູມມາແລ້ວ ຈິ່ງຮອດດອນຄວາຍຮ່ຳ ເຂົາກໍ່ພາກັນຈອດນອນແປງຕັ້ງຕູບຢູ່ຫັ້ນ, ເມື່ອນັ້ນມີນາຍບ້ານຜູ້ 1 ແບກກ້ອນຫີນ ລົງມາເພື່ອຈະຕີເອົາຂອງຄ້າຂາຍ ຈັນທະພານິດ ຫຼຽວເຫັນຫີນກ້ອນນັ້ນກາຍເກີດເປັນຄຳ ຈັນທະພານິດ ຈິ່ງຖາມວ່າ ນາຍບ້ານທ່ານຈະແບກອັນນັ້ນມາສັງນາຍບ້ານຜູ້ນັ້ນກໍ່ກ່າວວ່າ ຂ້ອຍແບກກ້ອນຫີນມາເພື່ອ ຈະມາຕີເອົາຂອງຄ້າພວກເຈົ້າທັງຫຼາຍ ຍາມນັ້ນຈັນທະພານິດ ກ່າວວ່າ ອັນທ່ານແບກມານັ້ນ ແມ່ນກ້ອນຄຳແດງມີຄ່າຫຼາຍ. ຊາຍຜູ້ນັ້ນ ຈິ່ງປົງລົງຈາກບ່າແລ້ວຫຼຽວເບິ່ງ ກໍ່ເຫັນເປັນກ້ອນຄຳແດງແທ້ ລາວຈິ່ງເວົ້າວ່າ ອັນນີ້ຫາກເກີດດ້ວຍບຸນສົມພານຂອງເຈົ້າ ຜູ້ຂ້າຂໍຖວາຍໄວ້ບູຊາ ເຈົ້າຈະໃຫ້ທານແກ່ຜູ້ຂ້າທໍ່ໃດກໍ່ໄດ້. ໃນຂະນະນັ້ນ ຫີນໃນດອນຄວາຍຮ່ຳ ແລະ ດອນຄວາຍຟູມ ກໍ່ກາຍເກີດເປັນຄຳໝົດທັງມວນ ຍາມນັ້ນຈັນທະພານິດ ຈິ່ງໃຫ້ຄົນທັງຫຼາຍໄປຂົນເອົາມາໃສ່ສາງໄວ້ເປັນສົມບັດ ແລະນຳມາແຈກປັນໃຫ້ແກ່ຄົນທັງຫຼາຍ ເຂົາກໍ່ດີໃຈຊົມຊື່ນຕໍ່ຈັນທະພານິດ ແລ້ວປຶກສາກັນຕົກລົງເຫັນດີຍົກໃຫ້ເປັນທ້າວພະຍາ ໂດຍພ້ອມກັນມາຣົດສົງ ໃຫ້ເຈົ້າຈັນທະພານິດ ນັ່ງເທິງກອງຄຳທີ່ນຳມານັ້ນແລ້ວກໍຫົດສົງ ພ້ອມທັງຕັ້ງຊື່ວ່າ ພະຍາຈັນທະພານິດ ຊະລິດທິສຸວັນນະພຸມ ຈາກນັ້ນຄົນທັງຫຼາຍໄດ້ພາກັນມາແຜ້ວມາຖາງ ປ່າໄມ້ທອງຫຼາງທີ່ສົບຫ້ວຍຄານ ຈິ່ງແປງຜາສາດ ທີ່ຢູ່ຂອງພະຍາ ເມື່ອເຂົາຂຸດເສົາໂຮງ ໄດ້ແຫ່ງຄຳກອງຢູ່ໃນພື້ນດິນມາກມາຍ ເຫດດັ່ງນັ້ນ, ຄົນທັງຫຼາຍຈິ່ງໃສ່ຊື່ວ່າ ໂຮງຊຽງທອງ ຕາມນິມິດ 2 ປະການນີ້.

ຈາກເນື້ອໃນຂອງຕຳນານຈັນທະພານິດຂ້າງເທິງນີ້ໄດ້ອະທິບາຍເຖິງການຕັ້ງຊື່ບ້ານເມືອງ ຂອງພະຍາຈັນທະພານິດ ຊື່ວ່າ ໂຮງຊຽງທອງ ການຕັ້ງຊື່ໂຮງດັ່ງກ່າວແມ່ນມີທີ່ມາຈາກ ໃນບໍລິເວນຂົງເຂດທີ່ຕັ້ງບ້ານເມືອງນັ້ນເປັນປ່າໄມ້ ເອີ້ນວ່າ ປ່າໄມ້ທອງຫຼາງ ແລະ ເວລາຂຸດເສົາສ້າງຜາສາດ ພົບເຫັນແຫ່ງຄຳ (ແຫ່ງທອງ) ທີ່ພື້ນດິນເປັນຈຳນວນຫຼວງຫຼາຍ. ເຫັນວ່າ ຊື່ ຊຽງທອງ ໃນປັດຈຸບັນຍັງຄົງຮັກສາຊື່ນີ້ໄວ້ຢູ່ເຊັ່ນ ວັດຊຽງທອງ, ບ້ານຊຽງທອງ, ໂຮງຊຽງທອງ, ນະຄອນຊຽງທອງເນື່ອງຈາກວ່າ ຜູ້ຄົນທີ່ມາອາໄສຕັ້ງຖິ່ນຖານຢູ່ຫຼວງພະບາງເຂົາເຈົ້າໄດ້ຮັບຮູ້, ເຂົ້າໃຈ ແລະ ຜູກພັນ ກັບສະຖານທີ່ແຫ່ງນີ້ ທີ່ເປັນດິນແດນອູດົມສົມບູນ ເຕັມໄປດ້ວຍຊັບສິນທອງຄຳ ແລະ ຕົ້ນທອງທີ່ມີຕຳນານເລົ່າຂານສືບທອດກັນມາຮອດປັດຈູບັນ. ນອກຈາກນີ້ເນື້ອໃນເລື່ອຍັງໄດ້ອະທິບາຍເຖິງການຕັ້ງບ້ານເມືອງຂອງພະຍາຈັນທະພານິດ ແມ່ນເລືອກຕັ້ງຢູ່ສະຖານທີ່ລຽບແຄມແມ່ນໍ້າຂອງ ແລະມີແມ່ນໍ້າຄານໄຫຼປ່ອງມາໃສ່ (ປາກຫ້ວຍ ຫຼືສົບຫ້ວຍ), ດັ່ງຂໍ້ຄວາມທີ່ວ່າ ຄົນທັງຫຼາຍ ໄດ້ພາກັນມາແຜ້ວມາຖາງ ປ່າໄມ້ທອງຫຼາງທີ່ສົບຫ້ວຍຄານ ຈິ່ງແປງຜາສາດ ທີ່ຢູ່ຂອງພະຍາ ເຊິ່ງເຮົາຈະເຫັນວ່າຊາວຫຼວງພະບາງມັກຕັ້ງຖິ່ນຖານຢູ່ເຂດທົ່ງພຽງລຽບຕາມແຄມແມ່ນໍ້າ.

ສະຫຼຸບ ເນື້ອໃນຕຳນານຈັນທະພານິດ ພົບ 5 ເນື້ອໃນຄື 1) ການຕັ້ງຊື່ບ້ານເມືອງຂອງພະຍາຈັນທະພານິດຊື່ວ່າ ໂຮງຊຽງທອງ, 2) ຂົງເຂດທີ່ຕັ້ງບ້ານເມືອງນັ້ນເປັນປ່າໄມ້ ເອີ້ນວ່າ ປ່າໄມ້ທອງຫຼາງ, 3) ເສົາສ້າງຜາສາດ ພົບເຫັນແຫ່ງຄຳ (ແຫ່ງທອງ), 4) ການຕັ້ງຊື່ ຊຽງທອງ ພົບວັດຊຽງທອງ, ບ້ານຊຽງທອງ, ໂຮງຊຽງທອງ, ນະຄອນຊຽງທອງ, 5) ການເລືອກຕັ້ງຢູ່ສະຖານບ້ານເມືອງລຽບແຄມແມ່ນໍ້າຂອງ ແລະ ແມ້ນໍ້າຄານໄຫຼປ່ອງມາໃສ່ (ປາກຫ້ວຍ ຫຼື ສົບຫ້ວຍ).

**3.1.2. ເນື້ອໃນຕຳນານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບສະຖານທີ່ສັກສິດ ແລະ ຈັດງານປະເພນີພິທີກຳ.**

**1) ຕຳນານນາກສິບຫ້າຕະກູນ**

ຕຳນານນາກສິບຫ້າຕະກຸນຂອງຊາວຫຼວງພະບາງ ແມ່ນເປັນເລື່ອງເລົ່າທີ່ສືບທອດມາຈາກເລື່ອງນິທານຂຸນບູລົມໄດ້ກ່າວໄວ້ ກ່ອນຈະເປັນເມືອງຫຼວງພະບາງໃນບັ້ນພະຍາແຖນລົງມາຕັ້ງເມືອງລຸ່ມວ່າ ໄດ້ມີລືສີ 2 ພີ່ນ້ອງຊື່ ອັມມະລະລືສີ ແລະໂຍທິກະລືສີ ເປັນຜູ້ລົງມາຕັ້ງຫຼັກໝາຍໄວ້ເມືອງຊຽງດົງຊຽງທອງ ກ່ອນຂຸນບູລົມຈະລົງມາປົກຄອງເມືອງລຸ່ມ ແລ້ວລືສີໄດ້ເອີ້ນນາກທັງ ສິບຫ້າ ຕະກຸນລົງມາສັ່ງສອນ ແລ້ວກໍມອບໝາຍໜ້າທີ່ໃຫ້ເພື່ອເປັນເຈົ້າອາຮັກບ້ານເມືອງ. ຈາກນັ້ນ. ໄດ້ມີຂຸນລໍໄປປົກຄອງເມືອງຊວາລ້ານຊ້າງທີ່ຊຽງດົງຊຽງທອງ ເມື່ອຂຸນລໍຂຶ້ນເປັນເຈົ້າແຜ່ນດິນແລ້ວ ກໍໄດ້ສ້າງເມືອງຊຽງດົງຊຽງທອງ ໂດຍມີການໝາຍເຂດນໍ້າແດນດິນເອົາໂງ່ນໝື່ນຫຼວງ (ກ່ອນຫີນໃຫຍ່) ປັດຈຸບັນຢູ່ປາກຫວ້ຍນໍ້າມ້າວບ້ານນາສ້າງເຫວີຍ) ເປັນຫາງນາກ ແລະ ເອົາປາກນໍ້າຄານເປັນຫົວນາກ ແລ້ວເອີ້ນຊື່ວ່າ ເມືອງສຣີສັຕນາຄຫຸດ.

ຈາກນັ້ນຜູ້ເຖົ້າຜູ້ແກ່ມີຄວາມເຊື່ອກ່ຽວກັບພະຍານາກສືບຕໍ່ກັນມາຈົນເຖິງປັດຈຸບັນໂດຍຕິດພັນກັບຮີດ 12ຂອງຊາວລາວເຮົາ ຄືຊາວນະຄອນຫຼວງພະບາງມີຄວາມເຊື່ອກ່ຽວກັບນາກ ສິບຫ້າ ຕະກູນທີ່ເປັນເຈົ້າອາຮັກຫຼັກເມືອງຂອງຊາວຫຼວງພະບາງ ໂດຍສະເພາະຈະເຫັນຮູບແກະສະຫຼັກນາກສິບຫ້າຕະກຸນຢູ່ ສີໜ້າພະລາດຊະວັງຂອງນະຄອນຫຼວງພະບາງ  ຮູບແຕ້ມໃນພະລາດຊະວັງ, ແລະ ຮູບຄວັດແກະສະລັກນາກ ຈົນເປັນຕຳນານເລົ່າສືບຕໍ່ກັນຈົນເຖິງທຸກວັນນີ້ວ່າ:

1) ນາງດຳ ຢູ່ຄົກທອນ 2) ນາງດອນ ຢູ່ຄົກເຮືອ 3) ນາງຜົມເຝືອ ຢູ່ເໜືອທ່າຊ້າງ 4) ອ້າຍຕົ່ງກວ້າງ ຂວາງຢູ່ປາກຄານ 5) ທ້າວທອງຈານ ຢູ່ຜາດ່ຽວ 6) ທ້າວຄຳຮຽວ ຢູ່ຜາເສືອ 7) ທ້າວບຸນເຢືອ ຢູ່ກ້ອນກ່າຍຟ້າ 8) ທ້າວຄຳຫຼ້າ ຢູ່ຄົກຜາບັງ 9) ທ້າວຄຳປັງ(ຄຳເປືອຍ) ຢູ່ພູຊ້າງ 10) ທ້າວບຸນກວ້າງ ຢູ່ພູຊວງ(ນະຄອນຫຼວງພະບາງ) 11) ທ້າວບຸນຍວງຢູ່ໜິດແອ່ນ(ຖໍ້າແອ່ນຢູ່ເມືອງປາກອູ) 12) ທ້າວຄຳແທ່ນ ຢູ່ກ້ອນຜາຊວາ 13) ທ້າວຈິງລວາ ຢູ່ຜາຢ່າເຖົ້າ(ຢູ່ເມືອງປາກອູ) 14) ທ້າວອຸສຸພະນາກເຈົ້າ ຢູ່ເຝົ້າສົບດົງ(ຫຼວງພະບາງ) 15) ທ້າວໃຈຈຳນົງ ສີສັດຕະນາກເຈົ້າເຝົ້າຢູ່ພະທາດພູສີ.

ເພື່ອເປັນການຈາລຶກບຸນຄຸນ ຫຼື ນັບຖືນາກຕົວທີ່ ສິບຫ້າ ຊື່ທ້າວໃຈຈຳນົງ ທີ່ເປັນເຈົ້າເຝົ້າຢູ່ພູສີ ຮອຍຕີນພະບາດ ແລະ ໜອງເທິງ

ເກດໃນພິພິຕະພັນ (ພະລາດຊະວັງເກົ່າ) ຊາວຫຼວງພະບາງຈຶ່ງໄດ້ມີພິທີແຫ່ນາກລົງຈາກພູສີໄປຫາ ໜອງເທິງເກດໃນຫໍພິພິຕະພັນ ກົງກັບມື້ຂຶ້ນປີໃໝ່ລາວຂອງທຸກໆ ໃນເວລາ 18:00 ໂດຍເອົາໄມ້ໄຜ່ມາສ້າງເປັນຮູບຈໍາລອງເປັນນາກໃຫຍ່ໆປະດັບປະດາໝົດທັງຕົວນາກ, ແລ້ວຈະມີຄົນຫາມ 20 ຄົນ ເປັນຊາຍນຸ່ງໂສ້ງສີດໍາເສື້ອຂາວ ດ້ວຍຂະບວນແຫ່ 30 ຄົນຊາຍນຸ່ງຊຸດສີດໍາ, ຜ້າແດງມັດຫົວ, ມັດແອວ, ແຕ່ໂຕ້ງເສື້ອແຂນສີແດງ ເມື່ອແຫ່ນາກໄປຮອດໜອງເທິງເກດທີ່ຫໍພິພິຕະພັນແລ້ວກໍແຫ່ອ້ອມ3 ຮອບ ຈຶ່ງນໍາເອົາຫຸ່ນນາກວາງໄວ້ປິ່ນໜ້າໄປທາງທິດເໜືອກໍຄືອານາຈັກໜອງແສ ເພື່ອລະນຶກເຖິງຕົ້ນກໍາເນີດທີ່ນາກໄດ້ເຄື່ອນຍ້າຍມາ.

ນອກຈາກນາກສິບຫ້າຕະກູນແລ້ວ ຊາວຫຼວງພະບາງຍັງເຄົາລົບນັບຖືພະຍານາກຊາວສີ່ຕະກຸນ ເຊິ່ງມີຮູບຄອັດຢູ່ວັດວິຊຸນ. ປະຊາຊົນໃນຫຼາຍເຂດລຽບຕາມແມ່ນໍ້າຂອງ, ນໍ້າຄານ, ນໍ້າເຊືອງ, ນໍ້າແຊງ ແລະ ບ່ອນອື່ນໆ ມີຄວາມເຊື່ອເລື່ອງນາກວ່າ ເປັນສັດທີ່ສັກສິດເຊິ່ງເຮັດໜ້າທີ່ປົກປັກຮັກສາບ້ານເມືອງ, ເຂດນໍ້າ, ແດນດິນບໍ່ໃຫ້ຄົນມາລົບລູ່ລ່ວງເກີນ, ພ້ອມທັງເປັນຜູ້ດົນບັນດານໃຫ້ບ້ານເມືອງມີຄວາມອຸດົມສົມບູນ.

ສະຫຼຸບແລ້ວ ເນື້ອໃນຕໍານານນາກສິບຫ້າຕະກຸນພົບ 3 ເນື້ອໃນຄື 1) ການປົກຫຼັກໝາຍເຂດນໍ້າແດນດິນເມືອງຊວາ, 2) ຄວາມເຊື່ອເລື່ອງພະຍານາກສິບຫ້າຕະກຸນ, 3) ຄວາມເຊື່ອເລື່ອງພະຍານາກຊາວສີ່ຕະກຸນ.

### 3.1.3 ເນື້ອໃນຕໍານານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບສະຖານທີ່ທາງທໍາມະຊາດ.

ສະຖານທີ່ທໍາມະຊາດຫຼາຍແຫ່ງໃນຫຼວງພະບາງ ທີ່ມີລັກສະນະທີ່ສອດຄອງກັບເລື່ອງເລົ່າທີ່ເປັນນິທານ, ຕໍາ ນານ ແລະ ອື່ນໆ ມັກຈະມີການກ່າວເຖິງອະນຸພາກຕ່າງໆ ທີ່ປາກົດຢູ່ໃນເນື້ອໃນຂອງເລື່ອງຖືກນໍາມາສ້າງສັນເປັນເລື່ອງ ໃໝ່ ຫຼື ໃສ່ເປັນຊື່ຂອງສະຖານທີ່ຕ່າງໆ ເພື່ອອະທິບາຍເຫດການທີ່ເກີດຂຶ້ນໃນເລື່ອງ ເຊັ່ນເລື່ອງນາງສິບສອງ ກໍຈະໄດ້ຍິນຄໍາວ່າ ຜາດັດແກ້ ເຊິ່ງເປັນການຕັດເອົາເຫດການທີ່ທ້າວພຸດທະເສນໄປສົ່ງສານໃຫ້ນາງກາງຣີ ພໍດີໄປຮອດຜາຕັດແກ່ເລີຍຄໍາລາວໄດ້ນອນພັກເຊົາຢູ່ທີ່ນັ້ນ ເທວະດາເຫັນສາ ນາງຍັກຜູ້ເປັນແມ່ນ້າໄດ້ຂຽນໃສ່ສານວ່າ ຖ້າທ້າວໄປຮອດໃຫ້ຈັບໄປກິນ ແຕ່ເທວະດາໄດ້ຕັດແກ້ວ່າ ເວລາໄປຮອດໃຫ້ແຕ່ງງານ ຜາດັ່ງກາວເລີຍເອີ້ນວ່າ ຜາຕັດແກ້ ຕາມເນື້ອໃນຂອງເລື່ອງນາງສິບສອງ. ຍັງມີຫຼາຍເຫດການທີ່ສໍາຄັນ ເຊັ່ນເຫດການນໍາພະບາງເຂົ້າມາອານາຈັກລ້ານຊ້າງ ແລະ ມີຫຼາຍສາກ ແລະ ຫຼາຍຕົວລະຄອນທີ່ມີໃນເລື່ອງເລົ່ານິທານ ໄດ້ມາມາຜູກກັບສະຖານທີ່ທາງທໍາມະຊາດດັ່ງ ລາຍລະອຽດລຸ່ມນີ້:

**1) ຕໍານານພູທ້າວພູນາງ**

ຢູ່ເມືອງອິນທະປັດຖານະຄອນ ມີຄົນຕັດຟືນຜູ້ໜຶ່ງທຸກຍາກ. ຊາຍທຸກຜູ້ນັ້ນມີເມຍຜູ້ໜຶ່ງ ແລະ ມີລູກສາວສິບສອງຄົນ. ດ້ວຍຄວາມທຸກຍາກຫາອັນປຽບບໍ່ໄດ້ ຊາຍຕັດຟືນຈຶ່ງເອົາລູກໄປໂຜດທີ່ປ່າທັງ 12 ຄົນກໍດັ້ນດອນຊອນປ່າໄປຈຶ່ງໄປພົບນາງຍັກຕົນໜຶ່ງຊື່ວ່າສຸນທະລາ ມີລູກສາວຄົນໜຶ່ງຊື່ວ່າ ນາງກັງຣີ. ນາງຍັກແມ່ໝາຍໄດ້ເອົານາງສິບສອງນັ້ນໄປຢູ່ໃນພະລາດຊະວັງເພື່ອໃຫ້ຢູ່ກິນກັບລູກສາວຂອງຕົນ. ນາງທັງສິບສອງໄດ້ຢູ່ໃນວັງກັບນາງຍັກ ເປັນເວລາຫຼາຍປີຈົນໃຫຍ່ຂຶ້ນມາພໍສອນສາວ ແລະ ຮູ້ວ່າແມ່ເປັນຍັກ ຈຶ່ງພາກັນລັກໜີ. ນາງຍັກກໍຕິດຕາມໄປຈົນຈະພົບແລ້ວນາງສິບສອງກໍເຂົ້າໄປລີ້ຢູ່ໃນປາກພະຍາງົວຕົວໜຶ່ງ. ເມື່ອຍັກກັບຄືນແລ້ວນາງສິບສອງຈຶ່ງອອກເດີນທາງຕໍ່ໄປ. ພໍໄປເຖິງນະຄອນຫຼວງເຊິ່ງເປັນເມືອງຂອງທ້າວປາລຸທະເສນ. ພະອົງເຫັນນາງທັງຫຼາຍມີຮູບຮ່າງຈົບງາມກໍເອົາຂຶ້ນເປັນມະເຫສີ. ນາງຍັກແມ່ໝ້າຍເມື່ອໄດ້ຮູ້ຂ່າວວ່ານາງສິບສອງເປັນເທວີຂອງພະຍາປາລຸທະເສນແລ້ວກໍແປງຮ່າງເປັນມະນຸດທີ່ມີເນື້ອກາຍໜຸ່ມນ້ອຍ ແລະ ງົດງາມທີ່ສຸດ ແລ້ວຕາມໄປໃນພະລາຊະວັງ ພະຍາປາລຸທະເສນເຫັນນາງກໍຫຼົງຮັກ ກໍຍົກຂຶ້ນເປັນອັກຄະມະເຫສີອີກຄົນ. ຕໍ່ນັ້ນມາບໍ່ນານນາງຍັກກໍແກ້ງເຈັບປ່ວຍຢ່າງໜັກບໍ່ກິນເຂົ້າ ແລະ ນໍ້າຈົນຮ່າງກາຍຈ່ອຍຜອມຫ່ຽວແຫ້ງໄປຈຶ່ງແນະນໍາໃຫ້ພະຍາໄປນໍາເອົາໝໍໂຫນ. ນາງຍັກຈໍາແລງກາຍເປັນແມ່ໝໍໄປຢູ່ຂ້າງໜ້າ. ເມື່ອຄົນໃຊ້ໄປຫາຈຶ່ງກ່າວຫາວ່ານາງສິບສອງເປັນຄົນເຂັດຄົນຂວາງ ຖ້າຂັບໄລ່ນາງພວກນາງໜີຈາກພະລາຊະວັງ ແລະ ເອົາຕາເຂົາທັງມອນມາສູ່ຂ້ອນ ພະຍານາງຈຶ່ງຈະຫາຍ ດ້ວຍຄວາມຫຼົງຮັກນາງຍັກພະຍາຈຶ່ງສັ່ງໃຫ້ບ່າວໄພ່ເຈາະຕານາງສິບສອງແລ້ວເອົາພວກນາງໄປໄວ້ຖໍ້າແຫ່ງໜຶ່ງ. ນາງຍັກເມື່ອເພິ່ນເອົາຕານາງສິບສອງມາສູ່ຂວັນຕົນແລ້ວກໍສົ່ງເມືອໃຫ້ລູກສາວຂອງຕົນຮັກສາໄວ້ທີ່ເມືອງໄວຍະລັບປະຕິ. ນາງສິບສອງໄດ້ຕັ້ງຄັນ (ຖືພາມານ) ທຸກຄົນ. ດ້ວຍການອົດອາຫານນາງສິບສອງເມື່ອຜູ້ໃດອອກລູກມາກໍຈົກປັນກັນກິນ. ຈະເປັນດ້ວຍການທໍາກົນອຸບາຍ ຫຼື ວ່າດ້ວຍຄວາມເວດທະນາຂອງບ່າວໄພ່ສ່ວນນາງຫຼ້າເຂົາເຈາະເອົາແຕ່ຕາຊ້າຍເທົ່ານັ້ນ. ເມື່ອນາງທັງສິບເອັດອອກລູກ ແລະ ປັນມາໃຫ້ກິນນາງກໍເອົາຫ້ອນໄວ້ບໍ່ກິນ. ພາຍລຸນມາເມື່ອນາງອອກລູກກໍເອົາເນື້ອຂອງລູກທັງສິບເອັດທີ່ຫ້ອນໄວ້ນັ້ນຢາຍໃຫ້ພວກເອື້ອຍກິນບອກວ່າເປັນພູດລູກຂອງຕົນຕາຍ ແລະ ເປື່ອຍເນົ່າອອກມາແຕ່ໃນທ້ອງ. ຕໍ່ນັ້ນມາແມ່ໄກ່ປ່າຕົວໜຶ່ງທີ່ມີໃຈເມດຕາປານີ ກໍຊອກເຂົ້າເປືອກມາລ້ຽງທ້າວນ້ອຍ ແລະ ນາງສິບສອງຄົນອັນລະເລັກລະນ້ອຍພໍບໍ່ໃຫ້ຕາຍ.

ເມື່ອທ້າວນ້ອຍໃຫຍ່ຂຶ້ນມານາງຫຼ້າກໍບອກເລົ່າແກ່ນາງສິບເອັດວ່າລູກຂອງຕົນຍັງຢູ່. ທ້າວນ້ອຍອອກຈາກຖໍ້າໄປທ່ຽວຕາມໝູ່ບ້ານໃກ້ຄຽງໂດຍຈັບເອົາໄກ່ເຖື່ອນໂຕແຂງແຮງໄປຕີກັບໄກ່ເດັກນ້ອຍຊາວບ້ານ. ພໍຕາເວັນລົງແລງ ຝູງເດັກນ້ອຍກໍເອົາເຂົ້າໃຫ້ ແລ້ວກໍຫາບມາສູ່ນາງສິບສອງຄົນກິນ. ວັນໜຶ່ງທ້າວນ້ອຍໄດ້ໄປຫຼິ້ນ ໝາກຮຸກໝາກສະກາໃນນະຄອນຫຼວງ ເຊິ່ງເປັນເມືອງພະຍາພໍ່ ປາລຸທະເສນໄດ້ຊົງຊາບວ່າທ້າວນ້ອຍເປັນຜູ້ຊໍານານການຫຼິ້ນ ຈຶ່ງຮຽກທ້າວນ້ອຍມາຫຼິ້ນໝາກຮຸກໝາກສະການໍາ. ພະອົງໄຕ່ຖາມເຖິງໂຄດວົງທ້າວນ້ອຍໄດ້ທູນຕອບວ່າ: ຕົນເປັນລູກຂອງນາງຈັນທະປະທຸມ ນ້ອງຫຼ້າຂອງນາງສິບເອັດ ພະຍາຈຶ່ງຮູ້ຈັກວ່າເປັນລູກຂອງຕົນ. ນັບແຕ່ວັນນັ້ນຕໍ່ໄປພະຍາ ກໍຊົງຊັກຊວນທ້າວນ້ອຍໃຫ້ມາຢູ່ໃນພະລາດຊະວັງນໍາພະອົງ. ທ້າວນ້ອຍກໍມາຕາມຄວາມປະສົງຂອງພະຍາ ແຕ່ວ່າໄດ້ລອບເອົາເຂົ້າປາອາຫານໄປລ້ຽງນາງສິບສອງຢູ່ບໍ່ຂາດວັນ. ພະຍາປາລຸທະເສນໄດ້ຕັ້ງຊື່ໃຫ້ທ້າວນ້ອຍວ່າພຸດທະເສນ.

ຕໍ່ມາບໍ່ນານ ນາງຍັກຜູ້ຈໍາແລງຕົວເປັນອັກຄະມະເຫສີຂອງພະຍາ ກໍຮູ້ວ່າທ້າວພຸດທະເສນເປັນລູກຂອງນາງຫລ້າຈຶ່ງຊອກຂ້າທ້າວນ້ອຍດ້ວຍເລ່ກົນອຸບາຍ. ນາງຈຶ່ງແກ້ງທໍາເປັນຄົນປ່ວຍຢ່າງໜັກອີກແລ້ວທູນພະຍາວ່າ ມີແຕ່ຢາເຊິ່ງຢູ່ໃນເມືອງໄວຍະລັບປະຕິຄືເມືອງເດີມຂອງນາງຢ່າງດຽວຈະເອົາຊີວິດຂອງນາງໄວ້ໄດ້ ແລະ ຜູ້ທີ່ຈະໃຊ້ໃຫ້ໄປເອົາຢານັ້ນນາງແລເຫັນແຕ່ທ້າວພຸດທະເສນຄົນດຽວເຊິ່ງສາມາດ. ພະຍາກໍສັ່ງ ທ້າວພຸດທະເສນ ໄປເອົາຢາຕາມຄໍາປະສົງຂອງນາງຍັກ. ທ້າວພຸດ

ທະເສນ ເລືອກເອົາມ້າຕົວໜຶ່ງທີ່ແຂງແຮງທີ່ສຸດເພາະເຫັນເດີນອາກາດໄດ້. ກ່ອນຈະອອກເດີນທາງໄປນາງຍັກໄດ້ມອບໜັງສືໃຫ້ທ້າວສະບັບໜຶ່ງແລ້ວກ່າວວ່າໃຫ້ເຈົ້າເອົາໜັງສືສະບັບນີ້ເມື່ອໃຫ້ນາງກັງຣີ ຜູ້ເປັນລູກສາວຂອງຕົນ. ເມື່ອນາງໄດ້ອ່ານໜັງສືນີ້ແລ້ວເຈົ້າຈະໄດ້ຮັບສິ່ງເພິ່ງພໍໃຈຂອງເຈົ້າເປັນອັນມາກ. ທ້າວພຸດທະເສນຮັບເອົາໜັງສືຈາກນາງຍັກ, ແລ້ວກໍອອກເດີນທາງໄປ ວັນໜຶ່ງໃກ້ຈະຮອດເມືອງໄວຍະລັບປະຕິ ເຫດວ່າທ້າວເດີນທາງອິດອ່ອນໜັກ ເມື່ອມາຮອດອາສົມລືສີແຫ່ງໜຶ່ງ ທ້າວກໍລົງຈາກມ້າເພື່ອເຊົາເມື່ອຍເອົາແຮງຢູ່ກ້ອງຕົ້ນໂພໄຊ ແລ້ວທ້າວ ແລະ ມ້າ ກໍພາກັນເຊືອບຫຼັບໄປ. ລືສີໄດ້ມາພົບ ແລະ ເຫັນກັບໜັງສືມັດແຂວນຄໍມ້າກໍມີຄວາມສົນໃຈຈຶ່ງຕັດເຊືອກເອົາໜັງສືອອກມາອ່ານ ມີໃຈຄວາມວ່າ: "ດູລາ ນາງກັງຣີ ຄັນວ່າຊາຍນ້ອຍຜູ້ນີ້ໄປຮອດໄປເຖິງເມື່ອໃດ ມຶງນາງຈົ່ງກິນຊາຍນ້ອຍຄົນນີ້ເສຍຢ່າໄວ້". ລືສີເຫັນໄພອັນຕະລາຍຈະມາເຖິງທ້າວນ້ອຍຈຶ່ງລຶບເນື້ອຄວາມທີ່ກ່າວມານີ້ແລ້ວແກ້ດ້ວຍເນື້ອຄວາມໃໝ່ວ່າ: "ຊາຍນ້ອຍຜູ້ນີ້ ເປັນລູກແຫ່ງນາງສູນທະລາ ຫາກໄດ້ສົ່ງມາໃຫ້ເປັນຜົວແຫ່ງມຶງນາງ ຄັນວ່າຊາຍຫາກມາເຖິງເມື່ອໃດ ໃຫ້ມຶງນາງແຕ່ງແປງຕ້ອນຮັບ ແລ້ວໃຫ້ນາງອາພິເສກເອົາທ້າວເປັນເຈົ້າເປັນຜົວ".

ທ້າວເດີນທາງຕໍ່ໄປຮອດເມືອງ ນາງກັງຣີ ເປີດນັງສືຂອງແມ່ອອກມາອ່ານ ແລ້ວກໍຮັບເອົາທ້າວພຸດທະເສນດ້ວຍຄວາມພໍໃຈ ເພາະທ້າວມີຮູບໂສມຕະໂນມພັນອັນງົດງາມ ເວລາເອົາກັນແລ້ວ ນາງກັງຣີ ກໍພາຜົວຂອງຕົນໄປຊົມສວນອຸທິຍານ ແລະ ແນະນຳໃຫ້ຮູ້ຂອງດີວິເສດທຸກສິ່ງທຸກປະການເປັນຕົ້ນວ່າຫວ້ານຫຼາຍຊະນິດເມື່ອຂວ່າງໄປເປັນປ່າໄຜ່ ໜາມ ເປັນໜອງ ເປັນໄຟເຜົາແຜ່ນດິນເປັນແມ່ນ້ຳໃຫຍ່ ແລະ ຢ່າງອື່ນໆ. ຮູ້ດັ່ງນັ້ນແລ້ວ ທ້າວກໍດີໃຈຈຶ່ງຊອກຊ່ອງທາງຈະລັກໜີຈາກນາງກັງຣີກັບໄປນະຄອນຫຼວງ. ວັນໜຶ່ງທ້າວໄດ້ສັ່ງໃຫ້ນາງກັງຣີຈັດການຫຼິ້ນມະຫໍລະສົບຄົບງັນໃຫ້ບ່າວໄພ່ທັງເມືອງໄດ້ຊຸມເຂົ້າຊຸມເຫຼົ້າຊື່ນມ່ວນ. ສ່ວນທ້າວກໍເອົາເຫຼົ້າແຈກນາງກັງຣີຫຼາຍໆເມົາເຫຼົ້າແລ້ວກໍພາກັນນອນລັບໄປຢ່າງບໍ່ຮູ້ເມື່ອຄືງ. ທ້າວເຫັນນາງກັງຣີ ແລະ ໄພ່ພົນຍັກນອນງຽບສະຫງັດແລ້ວທ້າວກໍເຂົ້າໄປເອົາກົງໃຈຂອງນາງຍັກສູນທະລາ ເອົາຕານາງສິບສອງ ເອົາໝາກເວົ້ຮູ້ຫາວໝາກນາວຮູ້ໂຫ່ແລ້ວຫວ້ານດີວິເສດຫຼາຍຊະນິດ. ຈາກນັ້ນທ້າວກໍຂຶ້ນຂີ່ມ້າລັກໜີໄປກາງຄືນ. ເມື່ອນາງກັງຣີສວ່າງເຫຼົ້າຮູ້ສຶກຕົວຄືນມາ ຊອກຫາຜົວບໍ່ເຫັນກໍເອົາລີພົນອອກຕິດຕາມ ທ້າວພຸດທະເສນເຫັນດັ່ງນັ້ນ, ກໍເອົາຫວ້ານດີວິເສດຂວ່າງໄປເກີດເປັນປ່າໄຜ່ໜາມ ເປັນໜອງ ເປັນໄຟເຜົາແຜ່ນດິນຕັນທາງທີ່ນາງຈະຕິດຕາມມາ. ນາງກໍເອົາລີພົນຟັນປ່າໄຜ່ຖົມໜອງ ແລະ ມອດໄຟຕິດຕາມມາໄດ້. ທ້າຍສຸດ ທ້າວກໍເອົາຫວ້ານຊະນິດໜຶ່ງຂວ່າງໄປເປັນແມ່ນ້ຳໃຫຍ່ ນາງກັງຣີເມື່ອມາເຖິງແຄມນ້ຳນີ້ກໍຕິດຕາມໄປບໍ່ໄດ້ນາງຈຶ່ງເອີ້ນຫາຜົວໃຫ້ກັບຄືນ ນາງມີຄວາມໂທມະນັດຄັບແຄ້ນແໜ້ນໜ້າໃຈເປັນທີ່ສຸດ ບໍ່ກິນເຂົ້ານ້ຳ ແລະ ອາຫານ ແລ້ວກໍເສຍຊີວິດໄປ ກ່ອນໃຈຈະຂາດນາງໄດ້ໄຫວ້ວອນເທວະດາ ຂໍຜູກກຳໝາຍເວນແກ່ຜົວຂໍໃຫ້ຜົວໄດ້ຕາຍຍ້ອນຄວາມສະເໜ່ຫາຮັກເໝືອນດັ່ງນາງ. ທ້າວພຸດທະເສນເມື່ອໄປຮອດນະຄອນຫຼວງແລ້ວກໍໄປສູ່ທີ່ຢູ່ ແມ່ ແລະ ປ້າຂອງຕົນ, ເອົາໝາກເວົ້ຮູ້ຫາວໝາກ ນາວຮູ້ໂຫ່ບີບໃສ່ໜ່ວຍຕານາງສິບສອງແລ້ວກໍຮຸ່ງແຈ້ງດັ່ງເດີມ. ເສັດແລ້ວທ້າວກໍເຂົ້າໄປໄຫວ້ພະຍາພໍ່ ນາງຍັກມາບເຫັນທ້າວ ກໍອັດສະຈັນເພາະວ່າໂຕໄດ້ຂຽນໜັງສືໃຫ້ ນາງກັງຣີ ຈິກກິນທ້າວແລ້ວ ເປັນປະການໃດຈຶ່ງບໍ່ກິນ ແລະ ກັບຄືນມາໄດ້ ດ້ວຍຄວາມພິໂລດໂກດແຄ້ນ ນາງຈຶ່ງກາຍເປັນຮູບຍັກເໝືອນເດີມແລ້ວກໍໂດດໄປຫວັງຈະຈິກກິນທ້າວພຸດທະເສນ. ທ້າວກໍເອົາດາບຕັດກົງໃຈຂອງນາງຍັກໃຫຍ່ຂາດລົ້ມຕາຍ. ເມື່ອນາງຍັກຕາຍແລ້ວ ທ້າວພຸດທະເສນກໍໄປເອົາແມ່ ແລະ ປ້າກັບເຂົ້າມາໃນພະລາດຊະວັງນຳພະຍາພໍ່ດັ່ງເດີມ. ເສັດແລ້ວທ້າວກໍລາພໍ່ແມ່ ແລະ ປ້າກັບຄືນເມືອຫາ ນາງກັງຣີຜູ້ເປັນເມຍພໍໄປເຖິງເມືອງໄວຍະລັບປະຕິກໍເຫັນນາງກັງຣີຕາຍຢູ່. ດ້ວຍຄວາມຜູກກຳໝາຍເວນຂອງນາງດັ່ງກ່າວແລ້ວ ທ້າວກໍເກີດຄວາມສະເໜ່ຫາຮັກນາງຢ່າງທີ່ສຸດມີຄວາມຄັບແຄ້ນແໜ້ນໃຈບໍ່ອາດຈະຕັ້ງຕົນຢູ່ໄດ້ຈຶ່ງສະຫຼົບທົບທ່າວລົງ ແລ້ວກໍຂາດໃຈຕາຍນຳນາງກັງຣີ. ເມື່ອທ້າວພຸດທະເສນຕາຍໄປນັ້ນໄດ້ເອົາຫົວໜູນຕົນນາງກັງຣີຢູ່ ເທບໄທ້ຢູ່ເທິງສະຫວັນຫຼິງເປັນດັ່ງນັ້ນ ຈຶ່ງພິຈາລະນາເຫັນວ່າເປັນຂອງບໍ່ຄວນດ້ວຍຕໍ່ໄປໃນພາຍໜ້າຜູ້ຍິງຈະຂົ່ມຜູ້ຊາຍເກີນໄປ ຈຶ່ງລົງມາຕ່າວສົບເຂົາທັງສອງໂດຍການເອົາສົບນາງກັງຣີເປັນຝ່າຍໜູນຕົນທ້າວ.



ຮູບພາບພູທ້າວ

ບັນພະບູລຸດໄດ້ເລົ່າສືບຕໍ່ກັນມາວ່າສົບທ້າວພຸດທະເສນ ແລະ ນາງກັງຣີໄດ້ກາຍມາເປັນ ພູທ້າວ ແລະ ພູນາງ, ບ່ອນລືສີຕັດເຊືອກເອົາໜັງສືອອກມາແກ້ໄຂໃຈຄວາມນັ້ນແມ່ນ ຜາຕັດແກ້ ເຊິ່ງຢູ່ຝັ່ງຂວາແມ່ນ້ຳຂອງຕໍ່ໜ້ານະຄອນຫຼວງພະບາງ, ສວນອຸທິຍານນາງກັງຣີນັ້ນວ່າແມ່ນທີ່ດິນຄ້າຍທະຫານຊຶ່ງແຕ່ກ່ອນຮຽກວ່າສວນແຖນມີໝາກໄມ້ກິນໝາກຫຼາຍຊະນິດ ແລະ ມີດອກໄມ້ອັນງົດງາມລາຍຊະນິດເປັນບ່ອນທ່ຽວຊົມທາງທຳມະຊາດທີ່ສວຍງາມ. ເມື່ອທ້າວພຸດທະເສນເກັບເອົາໝາກເວົ້ຮູ້ຫາວ ໝາກນາວຮູ້ໂຫ່ນັ້ນທ້າວຟ້າວຟັ່ງໄປ ໝາກໄມ້ເຫຼົ່ານັ້ນກໍເຣ່ຍຮອາຍ ຈຶ່ງກາຍເປັນຫາດໝາກນາວ. ວິນຍານຂອງນາງກັງຣີຕາມທີ່ເລົ່າກັນມາກໍຍັງມາສູນນາງທຽມທີ່ບ້ານຊຽງແມນຈົນຮອດດຽວນີ້.

ສະຫຼຸບລວມແລ້ວ ເນື້ອໃນຕຳນານພູທ້າວພູນາງພົບ 3 ເນື້ອໃນຄື 1) ທຳມະຊາດພູຜາປ່າໄມ້ໃນເມືອງຫຼວງພະບາງ, 2) ການແບ່ງແຍກຊົນຊັ້ນຊັດເຈນຂອງກະສັດ ແລະ ຄວາມຮັກອັນອຳມະຕະຂອງບ່າວສາວ; 3) ສ່ອງແສງຮ່ອງ ຮອຍທຳມະຊາດ.

**4. ວິພາກພົນ**

ໃນໄລຍະທີ່ຜ່ານມາໄດ້ມີນັກຄົ້ນຄວ້າຫຼາຍທ່ານທັງພາຍໃນ ແລະ ຕ່າງປະເທດກໍໄດ້ສຶກສາກ່ຽວກັບສິລະປະການສະແດງພື້ນເມືອງຂອງຊາວຫຼວງພະບາງ ແລະ ການພັນລະນາຜູ້ນຳອຸດົມຄະຕິໃນວັນນະຄະດີລ້ານຊ້າງໃນຫຼາຍແງ່ມູມທີ່ແຕກຕ່າງກັນ ເຊັ່ນ Norlin (2017) ໄດ້ສຶກສາຄຳຮຽກຊື່ທ່າຟ້ອນນາງແກ້ວຂອງຫຼວງພະບາງ. Chandalat (2012) ໄດ້ສຶກສາປັດໃຈທີ່ສົ່ງຜົນຕໍ່ການອະນຸລັກຂັບທຸ້ມ

ຫຼວງພະບາງ. Song (2015) ໄດ້ສຶກສາການຂັບມົ້ງ ບ້ານຊົ່ງຈ່າ ເມືອງນ້ຳບາກ ແຂວງຫຼວງພະບາງ; Kouthavong (2019) ສຶກສາບົດ ອ່ານໜັງສື ຫຼວງພະບາງ ຂອງ ຫຸມພັນ ຣັດຕະນະວົງ. Phengpanya et al. (2023) ໄດ້ສຶກສາການພັນລະນາຕົວລະຄອນຜູ້ນຳອຸດົມຄະຕິໃນວັນນະຄະດີລາວ ໂດຍມີຈຸດປະສົງສຶກສາລັກສະນະອະລິຍະບົດຂອງຜູ້ນຳອຸດົມຄະຕິໃນວັນນະຄະດີລາວ. Xaiyvongsan et al. (2025). ສຶກສາຄວາມຕ້ອງການພັດທະນາຫຼັກການ ການນຳໃຊ້ສື່ອອນລາຍເຂົ້າໃນການພັດທະນາວຽກງານສື່ສານມວນຊົນ (ວິທະຍຸ, ໂທລະພາບ, ໜັງສືພິມ) ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ໂດຍມີຈຸດປະສົງ ສຶກສາຄວາມຕ້ອງການພັດທະນາຫຼັກການນຳໃຊ້ສື່ອອນລາຍເຂົ້າໃນການພັດທະນາວຽກງານສື່ສານມວນຊົນ ແຂວງຫຼວງພະບາງ. ຈາກການສຶກສາພົບບົດຄົ້ນຄວ້າຂອງ Kauepathomma (2017) ສຶກສາປະເພນີ ແລະ ຄວາມເຊື່ອໃນນິທານພື້ນເມືອງລາວ ໄດ້ສຶກສາປະເພນີຈາກນິທານພື້ນເມືອງລາວພົບວ່າມີ 4 ປະເພດ ຄື ປະເພນີການເກີດ, ປະເພນີການບວດ ແລະ ລາສິກຂາ, ປະເພນີການແຕ່ງດອງ, ປະເພນີການຕາຍ. ສຶກສາຄວາມເຊື້ອຈາກນິທານ ພື້ນເມືອງລາວມີ 5 ຄວາມເຊື່ອ ຄື ຄວາມເຊື່ອກ່ຽວກັບທຳມະຊາດ ເຫັນວ່າປາກົດມີຢູ່ 4 ຢ່າງ ຄວາມເຊື່ອເລື່ອງການຢູ່ໄຟດື່ມນ້ຳຮ້ອນ, ຄວາມເຊື່ອເລື່ອງກຳນົດຝົນ, ເຊື່ອເລື່ອງຟ້າແມ່ນຟ້າຮ້ອງ, ຟ້າຜ່າ ແລະ ເຊື່ອເລື່ອງແຕ່ງພາຂວັນ ແລະຝ້າຍຜູກແຂນ, ຄວາມເຊື່ອກ່ຽວກັບສິ່ງເໜືອທຳມະຊາດເຫັນວ່າ ມີຄວາມເຊື່ອປາກົດຢູ່ 3 ຄື ຄວາມເຊື່ອເລື່ອງຂວັນ, ຄວາມເຊື່ອເລື່ອງຂອງວິເສດ ແລະ ຄວາມເຊື່ອເລື່ອງຜີ. ຈຸດທີ່ຄືກັນແມ່ນຄວາມເຊື່ອກ່ຽວກັບທຳມະຊາດ, ຄວາມເຊື່ອກ່ຽວກັບສິ່ງເໜືອທຳມະຊາດ, ຄວາມເຊື່ອເລື່ອງຂອງວິເສດ ແລະ ຄວາມເຊື່ອເລື່ອງຜີ; ຈຸດທີ່ແຕກຕ່າງກັນແມ່ນຕຳນານທີ່ອະທິບາຍເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ ແລະ ການຈັດງານປະເພນີພິທີກຳ ແລະ ສະຖານທີ່ທຳມະຊາດຂອງຕຳນານຫຼວງພະບາງ.

**5. ສະຫຼຸບ**

ເນື້ອໃນຂອງຕຳນານທີ່ອະທິບາຍເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ ແລະ ການຈັດງານປະເພນີພິທີກຳ ແລະ ສະຖານທີ່ທຳມະຊາດຂອງຕຳນານຫຼວງພະບາງ ພົບ 3 ເນື້ອໃນຫຼັກ ຄື ເນື້ອໃນຕຳນານພູມສັນຖານຫຼວງພະບາງ ແລະ ເນື້ອໃນຕຳນານພູມສັນຖານຫຼວງພະບາງ ທີ່ອະທິບາຍກ່ຽວກັບສະຖານທີ່ສັກສິດ ແລະ ຈັດງານປະເພນີພິທີກຳ ແລະ ເນື້ອໃນຕຳນານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບສະຖານທີ່ທາງທຳມະຊາດ. ໃນນັ້ນ ເນື້ອໃນຕຳນານພູມສັນຖານຫຼວງພະບາງ ທີ່ອະທິບາຍກ່ຽວກັບການຕັ້ງຖິ່ນຖານບ້ານເມືອງ ພົບຕຳນານຈັນທະພານິດ ພົບ 5 ເນື້ອໃນຄື 1) ການຕັ້ງຊື່ບ້ານເມືອງຂອງພະຍາຈັນທະພານິດຊື່ວ່າ ໂຮງຊຽງທອງ, 2) ຂົງເຂດທີ່ຕັ້ງບ້ານເມືອງນັ້ນເປັນປ່າໄມ້ ເອີ້ນວ່າ ປ່າໄມ້ທອງຫຼາງ, 3) ເສົາສ້າງຜາສາດເຫັນແທ່ງຄຳ (ແທ່ງທອງ), 4) ການຕັ້ງຊື່ ຊຽງທອງ ພົບ ວັດຊຽງທອງ, ບ້ານຊຽງທອງ, ໂຮງຊຽງທອງ, ນະຄອນຊຽງທອງ, 5) ການເລືອກຕັ້ງຢູ່ສະຖານບ້ານເມືອງລຽບແຄມແມ່ນ້ຳຂອງ ແລະ ແມ່ນ້ຳຄານໄຫຼປ່ອງມາໃສ່ (ປາກຫ້ວຍ ຫຼື ສົບຫ້ວຍ). ເນື້ອໃນຕຳນານພູມສັນຖານຫຼວງພະບາງທີ່ອະທິບາຍກ່ຽວກັບສະຖານທີ່ສັກສິດ ແລະ ຈັດງານປະເພນີພິທີກຳ ພົບຕຳນານນາກສິບຫ້າຕະກຸນພົບ 3 ເນື້ອໃນຄື 1) ການປັກຫຼັກໝາຍເຂດນ້ຳແດນດິນເມືອງຊວາ, 2) ຄວາມເຊື່ອເລື່ອງພະຍານາກສິບຫ້າຕະກຸນ, 3) ຄວາມເຊື່ອເລື່ອງພະຍານາກຊາວສີ່ຕະກຸນ. ເນື້ອໃນຕຳນານພູມສັນຖານຫຼວງພະບາງ ທີ່ອະທິບາຍກ່ຽວກັບສະຖານທີ່ທາງທຳມະຊາດ ພົບຕຳນານພູທ້າວພູນາງ ພົບ 3 ເນື້ອໃນ ຄື 1) ທຳມະຊາດພູຜາປ່າໄມ້ໃນເມືອງຫຼວງພະບາງ, 2) ການແບ່ງແຍກຊົນຊັ້ນຊັດເຈນຂອງກະສັດ ແລະ ຄວາມຮັກອັນອຳມະຕະຂອງບ່າວສາວ; 3) ສ່ອງແສງຮ່ອງຮອຍທຳມະຊາດ.

**6. ຂໍ້ຂັດແຍ່ງ**

ກຸ່ມນັກຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**


Chandalat, S. (2012). *Study the factors that affect the conservation of the Luang Prabang River. Department of Lao Language and Literature, Faculty of Linguistics*, Souphanouvong University.

Hongsouvhanh. P.(2007). *Ethnicity and the Thai people. Teaching materials*, Department of Thai and Oriental Languages, Faculty of Humanities and Sociology, Mahasarakham University.

Hongsouvhanh. P.(2011). *Ethnicity and the Thai people. Teaching materials, Department of Thai and Oriental Languages,* Faculty of Humanities and Sociology, Mahasarakham University.

Kouthavong, M. (2019). *Study of the Luang Prabang text by Humphan Rattanavong. Department of Lao Language and Literature,* Faculty of Linguistics, Souphanouvong University.

Kauepathomma, B. (2017). *Studying Lao Folklore and Beliefs*, Faculty of Education, National University

Norlin, P. (2017). *Study the name of the Nang Keo dance hall in Luang Prabang. Department of Lao Language and Literature,* Faculty of Linguistics, Souphanouvong University.

Song, K. (2015). *Studying the Hmong culture in Song Cha village, Nam Bak district, Luang Prabang province.* Department of Lao Language and Literature, Faculty of Linguistics, Souphanouvong University.

Sethaphan, T. (1993). *The use of ghost stories in the past. A case study of the Pa Chi villagers. Thesis, M.A., Bangkok.* Chulalongkorn University.

Sombat, Y. (1997) . *Humans and Culture*. Thammasat University Press.

Stuart, H. (1997). *Representation: Cultural Representations and Signifying Practices London: Sage.*

Stuart, H. (2003). *Representation: Cultural Representations and Signifying Practices London:* Sage.

SAIYVONGSAN, C., MEKTHANVANH, V., PHEUAPHOM, S., PHENGPHANYA, P., & DUANGCHANH, B. (2025). Study the Need to Develop Principles for Using online Media in the Development of Mass Communication Work (Radio, Television, Print media) of the Department of Press, Culture and Tourism in Luang Prabang Province. *Souphanouvong University Journal Multidisciplinary Research and Development, 10*(Special Issue), 72–76. https://doi.org/10.69692/SUJMRD10special72LuangLat,

P. (2016). *Research Skills*. Printed in Hanoi, Vietnam.

Library, N. (1969). *Luang Prabang City Chronicle. Ministry of Education*. Arts. Sports and Youth. Vientiane.

Onmanisone,T. (2022). *Lao Language Dictionary*.

Phengphanya, P., Bouphapanya, S., Sathamma, P., & Bountavong, S. (2023). Habits' Description of the Ideal Characters in Lao-Literature: https://doi.org/10.69692/SUJMRD0901220. *Souphanouvong University Journal Multidisciplinary Research and Development*, *9*(1), 227–236. Retrieved from https://www.su-journal.com/index.php/su/article/view/335

Piniht, S. (1987). *Chronicles of Luang Prabang.* 1st printing, State Printing House. Vientiane.

Phimpanith, S. (2015).The Heritage of the Elephants (1st ED), State Printing House. Vientiane Capital.

Thitathanathalang, S. (1994). *Thai Society and Culture* (8th printing). Bangkok: Thai Wattana Panich.

Vhanhliphodom, S. (2011). *A guide to thinking about the meaning of cultural landscapes: learning from within and understanding the local.* Bangkok. Lek-Paphai Wiliaphan Foundation.

Vhanhliphodom, S. (2014). *A guide to thinking about the meaning of cultural landscapes: learning from within and understanding the local*. Bangkok. Lek-Paphai Wiliaphan Foundation.